ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 007 /ທຄຕລ 2018
ນະຄອນຫຼວງວຽງຈັນ, ວັນທີ, 16 OCT 2018

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ຄັ້ງທີ 4 ປະຈຳປີ 2018, ວັນທີ 16/10/2018

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 4 ປະຈຳປີ 2018 (ຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 16/10/2018 ທີ່ຫ້ອງປະຊຸມ ຊັ້ນ 12 ໂຮງແຮມຈຳປາສັກແກລນ, ແຂວງຈຳປາສັກ.

ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:

1. ຮັບຮອງການປັບປຸງ 5 ຄະນະກຳມະການຂອງສະພາບໍລິຫານ.
2. ຮັບຮອງ ທິດທາງໃນການຍົກຂະແໜງນິຕິກຳເປັນພະແນກນິຕິກຳ ໃນປີ 2019, ຮັບຮອງບົດວິພາກ ພາລະບົດບາດຂອງພະແນກນິຕິກຳ, ໃຫ້ນຳສະເໜີ ທະນາຄານແຫ່ງ ສປປ ລາວ ໃນການສະເໜີສ້າງຕັ້ງພະແນກໃໝ່ ຕາມຂັ້ນຕອນ.
3. ຮັບຮອງ ສູດຄິດໄລ່ນະໂຍບາຍຜົນຕອບແທນພະນັກງານໃນເວລາອອກການ ແລະ ຮັບຮອງແຫຼ່ງທີ່ມາ ຂອງຄັງແຮຜົນຕອບແທນພະນັກງານໃນເວລາອອກການ.
4. ຮັບຮອງລະບຽບວ່າດ້ວຍຕຳແໜ່ງງານ, ມາດຖານເງື່ອນໄຂຂອງແຕ່ລະຕຳແໜ່ງງານ ແລະ ຂັ້ນຕອນການແຕ່ງຕັ້ງຊັບຊ້ອນພະນັກງານ ທຄຕລ.
5. ຮັບຮອງ ນະໂຍບາຍເງິນຕຳແໜ່ງຂອງວິຊາການຊຳນານງານ ແລະ ວິຊາການປະສົບການ.
6. ຮັບຮອງບໍລິສັດກວດສອບພາຍນອກ ທຄຕລ ປະຈຳປີ 2019, ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ.
7. ຮັບຮອງເອົາການປັບປຸງໂຄງສ້າງພະແນກສິນເຊື່ອແບບໃໝ່ ເພື່ອໃຫ້ສອດຄ່ອງກັບການປະຕິບັດຕາມຫຼັກການ Basel II ໂດຍມີການແຍກຈາກພະແນກຄຸ້ມຄອງສິນເຊື່ອໃນປັດຈຸບັນອອກເປັນ 03 ພະແນກຄື: ພະແນກ ຂາຍຜະລິດຕະພັນສິນເຊື່ອ, ພະແນກບໍລິຫານສິນເຊື່ອ ແລະ ພະແນກປະຕິບັດການສິນເຊື່ອ. ຮັບຮອງເອົາບົດວິພາກການສ້າງຕັ້ງ 03 ພະແນກ ແລະ ຄູ່ມືບໍລິຫານສິນເຊື່ອ, ເພື່ອນຳສະເໜີ ທະນາຄານແຫ່ງ ສປປ ລາວ ພິຈາລະນາຕາມຂັ້ນຕອນ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປອ ບຸນເຫຼືອ ສິນໄຊວໍລະວົງ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA